ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 246/ຫກ
ນະຄອນຫຼວງວຽງຈັນ, ວັນທີ 18 ກັນຍາ 2026

ໜັງສືແຈ້ງ

ເຖິງ: ພະນັກງານ, ທະຫານ, ຕຳຫຼວດ, ພໍ່ຄ້າຊາວຂາຍ, ນັກຮຽນ-ນັກສຶກສາ, ພໍ່-ແມ່ປະຊາຊົນ ໃນທົ່ວສັງຄົມ

ເລື່ອງ:ການເຜີຍແຜ່ຂໍ້ມູນຂ່າວສານ ທີ່ຕິດພັນກັບຮູບຄືໃບທະນະບັດ ທີ່ບໍ່ມີຄວາມຈິງ.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 66/ສພຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍະກຳທາງລະບົບຄອມພິວເຕີ ສະບັບເລກທີ 61/ສພຊ, ລົງວັນທີ 15 ກໍລະກົດ 2015;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງທະນະບັດ ສະບັບເລກທີ 854/ລບ, ລົງວັນທີ 31 ທັນວາ 2025;
- ອີງຕາມ ສະພາບໃນປະຈຸບັນທີ່ມີການນຳໃຊ້ສື່ສັງຄົມອອນລາຍເຂົ້າໃນການເຜີຍແຜ່ຂໍ້ມູນຂ່າວສານທີ່ມີທັງຄວາມຈິງ ແລະ ບໍ່ມີຄວາມຈິງ

ຫ້ອງການ, ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບ ຢ່າງທົ່ວເຖິງວ່າ: ໂດຍອີງຕາມກົດໝາຍວ່າດ້ວຍ ທຫລ, ມາດຕາ 9 ວ່າດ້ວຍສິດຂອງ ທຫລ ຄື: "ທຫລ ມີສິດ ພິມເງິນຕາມແບບ ແລະ ຄຸນລັກສະນະທີ່ລັດຖະບານອະນຸມັດ ແລະ ພິມຈຳໜ່າຍເງິນອອກສູ່ຂອດຈໍລະຈອນ". ແຕ່ໃນໄລຍະຜ່ານມາ ກໍ່ຄືສະພາບໃນປັດຈຸບັນ ໄດ້ມີບຸກຄົນຈຳນວນໜຶ່ງ ໄດ້ເຜີຍແຜ່ຮູບພາບທີ່ຄ້າຍຄືທະນະບັດ ປະເພດໃບຕ່າງໆເຊັ່ນ: ໃບ 200,000 ກີບ, 500,000 ກີບ, 1,000,000 ກີບ, 2,000,000 ກີບ, 5,000,000 ກີບ ແລະ ອື່ນໆ ຊຶ່ງໄດ້ສ້າງຄວາມສັບສົນ ແລະ ມີຄວາມເຂົ້າໃຈຄາດເຄື່ອນ, ພ້ອມທັງ ໄດ້ມີການເຜີຍແຜ່ຕໍ່ໆກັນໄປ ເຮັດໃຫ້ສັງຄົມມີຄວາມບໍ່ສະຫງົບ.

ສະນັ້ນ, ຫ້ອງການ ທຫລ ຈຶ່ງຂໍແຈ້ງມາຍັງທຸກພາກສ່ວນ ເພື່ອມີຄວາມຮັບຮູ້ ແລະ ເຂົ້າໃຈ ເປັນເອກະພາບວ່າ: ໃນກໍລະນີມີການນຳເອົາທະນະບັດຮູບແບບໃໝ່ ຫຼື ຈະມີການປັບປຸງ-ປ່ຽນແປງຮູບແບບທະນະບັດ ຂອງ ສປປ ລາວ ເພື່ອອອກສູ່ຂອດຈໍລະຈອນ, ທຫລ ຈະແຈ້ງໃຫ້ທົ່ວສັງຄົມ ໄດ້ຮັບຊາບຢ່າງເປັນທາງການ ແຕ່ຫົວທີ ຕາມກຳນົດເວລາທີ່ເໝາະສົມ. ໃນກໍລະນີ ທີ່ບໍ່ມີການແຈ້ງຢ່າງເປັນທາງການຈາກ ທຫລ, ຖືວ່າຂ່າວສານທີ່ເຜີຍແຜ່ໃນສັງຄົມ ດ້ວຍຮູບການຕ່າງໆນັ້ນ ເປັນຂ່າວປອມ ຫຼື ບໍ່ມີຄວາມຈິງ. ພ້ອມກັນນີ້, ຖ້າບຸກຄົນ, ນິຕິບຸກຄົນ ຫຼື ພາກສ່ວນຕ່າງໆ ທີ່ໄດ້ມີການເຜີຍແຜ່ ຫຼື ສົ່ງຕໍ່ ກ່ຽວກັບຂໍ້ມູນທີ່ບໍ່ມີຄວາມຈິງດັ່ງກ່າວ ຈະຕ້ອງຮັບຜິດຊອບຕໍ່ກົດໝາຍ ແລະ ລະບຽບການກ່ຽວຂ້ອງທີ່ໄດ້ກຳນົດໄວ້. ສະນັ້ນ, ຈຶ່ງຂໍຮຽກຮ້ອງໃຫ້ທົ່ວສັງຄົມ ຈົ່ງຍົກສູງສະຕິລະວັງຕົວໃນການຕິດຕາມຂໍ້ມູນຂ່າວສານຢ່າງຮອບຄອບ, ຖ້າຫາກມີຂໍ້ສົງໄສ ຫຼື ບັນຫາໃດທີ່ບໍ່ລະອຽດ-ຈະແຈ້ງ ແມ່ນສາມາດພົວພັນສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ໝາຍເລກ 021 213109 ແລະ 020580 07361.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ແລະ ທຸກພາກສ່ວນໃນສັງຄົມ ເພື່ອຊາບ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ ຕາມເນື້ອໃນຈິດໃຈຂອງໜັງສືແຈ້ງການສະບັບນີ້ດ້ວຍ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ນາງ ... ແກ່ນວົງມະຈັນ